ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າແຂວງສາລະວັນ

ເລກທີ 787/ຈຂ.ສວ
ສາລະວັນ, ວັນທີ 8.11.2022

# ຂໍ້ຕົກລົງ

## ວ່າດ້ວຍ ການຄຸ້ມຄອງ, ປົກປັກຮັກສາ ແລະ ຟື້ນຟູປ່າໄມ້ ຢູ່ແຂວງສາລະວັນ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ(ສະບັບປັບປຸງ)ເລກທີ 68/ສພຊ,ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 19 ແລະ ມາດຕາ 20.
- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019, ກົດໝາຍ ວ່າດ້ວຍ ທີ່ດິນ (ສະບັບປັບປຸງ) ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019
- ອີງຕາມ ແຜນກຳນົດພັດທະນາກະສິກຳ ແລະ ປ່າໄມ້ ແຂວງ ສາລະວັນ ຍຸດທະສາດ ຮອດປີ 2025 ແລະ ວິໄສທັດ ຮອດ ປີ 2030.

## ເຈົ້າແຂວງ ສາລະວັນ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການປົກປັກຮັກສາ ແລະ ການຟື້ນຟູປ່າໄມ້ ໃຫ້ກາຍເປັນປ່າ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ ການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ໃຫ້ມີປະສິດທິຜົນ ແລະ ຮັບປະກັນເຮັດໃຫ້ອັດຕາຄວາມປົກຫຸ້ມ ຂອງປ່າໄມ້ໃຫ້ໄດ້ 72% ຂອງເນື້ອທີ່ທົ່ວແຂວງ ຮອດປີ 2025 ແລະ ຍົກສູງປະສິດທິພາບທາງດ້ານອັດຕາຄວາມປົກຫຸ້ມ, ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ - ສັງຄົມ ຂອງແຂວງໃຫ້ມີທ່າກ້າວຂະຫຍາຍຕົວໄວ.

ມາດຕາ 2 ການຄຸ້ມຄອງ, ປົກປັກຮັກສາ ແລະ ຟື້ນຟູປ່າໄມ້

ການຄຸ້ມຄອງແມ່ນ ການພັດທະນາ ແລະ ປົກປັກຮັກສາໂດຍການວາງລະບຽບ, ການກຳນົດມາດຕະການໃນການຄຸ້ມຄອງປ່າໄມ້, ການຕິດຕາມ, ກວດກາ, ການນຳໃຊ້ປ່າໄມ້ໃຫ້ມີປະສິດທິຜົນມີຄວາມສະຫງົບ ແລະ ປະຕິບັດຖືກຕ້ອງຕາມເປົ້າໝາຍ.

ການປົກປັກຮັກສາແມ່ນ ການດຳເນີນກິດຈະການຕ່າງໆກ່ຽວກັບປ່າໄມ້ ເພື່ອການຮັກສາແຫຼ່ງນ້ຳ, ປ້ອງກັນການເຊາະເຈື່ອນຂອງດິນ ແລະ ຄຸນນະພາບຂອງດິນ, ເຂດຍຸດທະສາດປ້ອງກັນຊາດ, ປ້ອງກັນໄພທຳມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ;

ການຟື້ນຟູປ່າໄມ້ແມ່ນ ການປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ຢູ່ໃນສະພາບເຊື່ອມໂຊມທີ່ໄດ້ຈັດແບ່ງໄວ້ ເພື່ອບູລະນະໃຫ້ກາຍເປັນປ່າໄມ້ທຳມະຊາດທີ່ອຸດົມສົມບູນຄືນ ໂດຍນຳໃຊ້ເຕັກນິກ ທີ່ເໝາະສົມຕາມແຕ່ລະກໍລະນີຂອງພື້ນທີ່;

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນ ຂໍ້ຕົກລົງ ສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຊັບພະຍາກອນປ່າໄມ້** ໝາຍເຖິງ ຊັບພະຍາກອນຕ່າງໆ ທີ່ມີຊີວິດ ແລະ ບໍ່ມີຊີວິດຊຶ່ງປະກອບດ້ວຍ ດິນ, ພືດພັນ, ຕົ້ນໄມ້, ນ້ຳ, ສັດນ້ຳ, ສັດປ່າ ແລະ ອື່ນໆ ທີ່ມີຢູ່ໃນເຂດທີ່ດິນປ່າໄມ້;
2. **ການຄຸ້ມຄອງປ່າໄມ້** ໝາຍເຖິງ ການການປົກປັກຮັກສາປ່າໄມ້ທີ່ມີແລ້ວບໍ່ໃຫ້ປ່າໄມ້ຖືກທຳລາຍ;
3. **ການປົກປັກຮັກສາ** ໝາຍເຖິງການ ກຳນົດເນື້ອທີ່ປ່າໄມ້ທີ່ເໝາະສົມໃນການອະນຸລັກປ່າໄມ້, ປົກປັກຮັກສາແຫຼ່ງນ້ຳ, ປ້ອງກັນການເຊາະເຈື່ອນ ແລະ ສິ່ງແວດລ້ອມ;
4. **ການຟື້ນຟູປ່າໄມ້** ໝາຍເຖິງ ການປັບປຸງສະພາບປ່າໄມ້ ທີ່ຢູ່ໃນສະພາບເຊື່ອມໂຊມໃຫ້ກາຍເປັນປ່າ;
5. **ການຟື້ນຟູປ່າໄມ້ແບບທຳມະຊາດ** ໝາຍເຖິງ ການຂະຫຍາຍພັນດ້ວຍແກ່ນ, ຮາກ, ເຫງົ້າ ຫຼື ຕໍໄມ້ ຈາກທຳມະຊາດຂອງ ພັນໄມ້ຊະນິດ ຕ່າງໆ;
6. **ການຟື້ນຟູປ່າໄມ້ແບບປູກເສີມ** ໝາຍເຖິງ ການປູກເສີມພັນໄມ້ຊະນິດຕ່າງໆ ທີ່ເຫັນວ່າເໝາະສົມ ໂດຍສອດຄ່ອງ ກັບຈຸດປະສົງ ແລະ ເປົ້າໝາຍ ຂອງ ການຟື້ນຟູປ່າໄມ້;
7. **ປ່າຟື້ນຟູ** ໝາຍເຖິງ ປ່າໄມ້ທີ່ຟື້ນຟູຈາກປ່າເຊື່ອມໂຊມທີ່ຖືກທຳລາຍໃຫ້ກາຍເປັນປ່າໄມ້ທີ່ສົມບູນຄືນໃໝ່;
8. **ເຂດປ່າໄມ້ຂອງບ້ານ** ໝາຍເຖິງ ເນື້ອທີ່ປ່າໄມ້ທຸກປະເພດໃນເຂດຄຸ້ມຄອງຂອງບ້ານ ທີ່ຖືກກຳນົດຂຶ້ນຕາມແຜນຈັດສັນທີ່ດິນ ແລະ ການມອບດິນ-ມອບປ່າ ຂັ້ນບ້ານ;
9. **ການຫັນປ່ຽນທີ່ດິນປ່າໄມ້** ໝາຍເຖິງ ການຫັນປ່ຽນຈາກປະເພດທີ່ດິນປ່າໄມ້ ໄປເປັນທີ່ດິນປະເພດອື່ນ;
10. **ທີ່ດິນປ່າໄມ້** ໝາຍເຖິງເນື້ອທີ່ດິນທຸກຕອນທີ່ມີປ່າໄມ້ ຫຼື ບໍ່ມີປ່າໄມ້ປົກຄຸມຢູ່ ຊຶ່ງລັດໄດ້ກຳນົດໃຫ້ເປັນທີ່ດິນປ່າໄມ້;
11. **ທີ່ດິນ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ** ໝາຍເຖິງ ເນື້ອທີ່ດິນທຸກຕອນທີ່ມີປ່າໄມ້ ແລະ ບໍ່ມີປ່າໄມ້ ຊຶ່ງລັດໄດ້ກຳນົດໃຫ້ເປັນທີ່ດິນປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;
12. **ທີ່ດິນປ່າຊຸດໂຊມ** ໝາຍເຖິງ ເຂດດິນປ່າໄມ້ ທີ່ຖືກທຳລາຍຢ່າງໜັກເປັນເວລາຫຼາຍປີຕໍ່ເນື່ອງກັນ ແລະ ໃຊ້ເວລາຫຼາຍສິບປີ ຈຶ່ງສາມາດຟື້ນຟູດ້ວຍຕົວມັນເອງໄດ້;
13. **ທີ່ດິນປ່າປອກໂຫຼ້ນ** ໝາຍເຖິງ ເນື້ອທີ່ດິນປ່າໄມ້ ທີ່ຖືກທຳລາຍຢ່າງໜັກ ເປັນເວລາຫຼາຍປີຕໍ່ເນື່ອງກັນ;
14. **ເຄື່ອງປ່າຂອງດົງ** ໝາຍເຖິງ ພືດທີ່ເກີດຂຶ້ນຕາມທຳມະຊາດ ຫຼື ປູກຂຶ້ນ ຊຶ່ງລວມມີປະເພດ ຕົ້ນ, ລຳ, ເຄືອ, ຫົວ, ຮາກ, ຍອດ, ໜໍ່, ໃບ, ດອກ, ໝາກ, ເມັດ ຫຼື ແກ່ນ, ເປືອກ, ນ້ຳມັນ, ຢາງ, ເຫັດ, ນ້ຳເຜີ້ງ ລວມທັງພືດເປັນຢາ ແລະ ອື່ນໆ;
15. **ໄມ້ປູກ** ໝາຍເຖິງ ຕົ້ນໄມ້ທຸກຊະນິດທີ່ປູກຂຶ້ນແບບເປັນລະບົບ ຫຼື ປູກແບບກະແຈກກະຈາຍ;
16. **ລະບົບນິເວດ** ໝາຍເຖິງ ສາຍພົວພັນລະຫວ່າງ ສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດ ທີ່ຄົງຕົວຢູ່ ທຳມະຊາດ;

ມາດຕາ 4 ນະໂຍບາຍກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້

ອົງການປົກຄອງແຂວງ ໄດ້ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ, ຊຸກຍູ້ສົ່ງເສີມ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຄຸ້ມຄອງ, ປົກປັກຮັກສາ, ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້ ທຸກປະເພດໃນເຂດປ່າຊຸດໂຊມ. ປ່າປອກໂຫຼ້ນ ໃຫ້ກາຍເປັນປ່າທີ່ອຸດົມສົມບູນ ແນ່ໃສ່ເພື່ອເຮັດໃຫ້ການນຳໃຊ້ປ່າໄມ້ເປັນແຫຼ່ງທ່ອງທ່ຽວ, ສະຖານທີ່ພັກຜ່ອນ, ບ່ອນສະຖານທີ່ຄົ້ນຄວ້າທົດລອງການຊື້-ຂາຍກາກບອນປ່າໄມ້ , ແລະ ການບໍລິການດ້ານລະບົບນິເວດປ່າໄມ້ ແລະ ອື່ນໆ.

ມາດຕາ 5 ຫຼັກການກ່ຽວກັບ ການຄຸ້ມຄອງ ປົກປັກຮັກສາ ແລະ ການຟື້ນຟູປ່າໄມ້

ການຄຸ້ມຄອງ ປົກປັກຮັກສາ ແລະ ຟື້ນຟູປ່າໄມ້ ໃຫ້ປະຕິບັດຕາມຫຼັກການຕົ້ນຕໍ ດັ່ງລຸ່ມນີ້:

1. ຕ້ອງສອດຄ່ອງກັບແນວທາງ, ນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດ;
2. ຕ້ອງສອດຄ່ອງກັບແຜນຍຸດທະສາດການພັດທະນາເສດຖະກິດ - ສັງຄົມ ຂອງແຂວງອາງອອກ ໃນແຕ່ລະໄລຍະ;
3. ຕ້ອງສອດຄ່ອງກັບມາດຕະຖານເຕັກນິກວິຊາການ, ຄຸນນະພາບໃນການຄຸ້ມຄອງປົກປັກຮັກສາປ່າໄມ້ໃຫ້ມີຄວາມຍືນຍົງ;
4. ຕ້ອງຮັບປະກັນການຄຸ້ມຄອງ ປົກປັກຮັກສາ ແລະ ການຟື້ນຟູປ່າໄມ້ , ທີ່ດິນປ່າໄມ້ໃຫ້ມີປະສິດທິຜົນສູງ, ປະຢັດ, ຍືນຍົງ ແລະ ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ;

ມາດຕາ 6 ການຮ່ວມມື ແລະ ພົວພັນກັບແຂວງທີ່ມີຊາຍແດນຕິດຈອດ

ອົງການປົກຄອງແຂວງ ສົ່ງເສີມການພົວພັນ, ຮ່ວມມືກັບຕ່າງແຂວງ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ໃນການອະນຸລັກ, ປົກປັກຮັກສາ, ຄົ້ນຄວ້າທົດລອງ ແລະ ຂະຫຍາຍພັນສັດ, ພັນໄມ້ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິທະຍາສາດ, ເທັກໂນໂລຊີ ແລະ ດ້ານວິຊາການ ໃນການປະຕິບັດວຽກງານລະຫວ່າງແຂວງ ທີ່ມີຊາຍແດນຕິດຈອດ.

ມາດຕາ 7 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ໄດ້ທົ່ວໄປ ສຳລັບພະນັກງານ, ທະຫານ, ຕຳຫລວດ, ບຸກຄົນ ນິຕິບຸກຄົນ , ນັກທຸລະກິດ, ຊາວຕ່າງດ້າວ ແລະ ການຈັດຕັ້ງທົ່ວແຂວງສາລະວັນ.

# ໝວດທີ 2

# ການຄຸ້ມຄອງປ່າໄມ້

### ມາດຕາ 8 ການຄຸ້ມຄອງປ່າໄມ້

ພະແນກກະສິກຳ ແລະ ປ່າໄມ້ແຂວງ ປະສານສົມທົບ ກັບ ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນໃນ 8 ຕົວເມືອງເປັນເຈົ້າການຈັດຕັ້ງໜ່ວຍງານສະເພາະເພື່ອຮັບຜິດຊອບຄຸ້ມຄອງ ປ່າສະຫງວນຢູ່ໃນແຕ່ລະແຫ່ງ, ປ່າປ້ອງກັນ, ປ່າຜະລິດ, ປ່າປ້ອງກັນຂອງແຂວງ, ປ່າສະຫງວນຂອງເມືອງ ປະກອບມີພະນັກງານວິຊາການປະຈຳໃນແຕ່ລະແຫ່ງ ໂດຍອາໄສກຳລັງຂອງປະຊາຊົນ ເປັນຕົ້ນຕໍໃນການເຄື່ອນໄຫວວຽກງານຄຸ້ມຄອງປ່າໄມ້ໃນແຕ່ລະປະເພດດັ່ງນີ້:

1. ພະແນກກະສິກຳ ແລະ ປ່າໄມ້ ແຂວງ ປະສານສົມທົບ ກັບ ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການໃນການຄຸ້ມຄອງປ່າໄມ້ ປ່າປ້ອງກັນແຫ່ງຊາດ, ປ່າສະຫງວນແຫ່ງຊາດ , ປ່າຜະລິດແຫ່ງຊາດ ແລະ ປ່າປ້ອງກັນຂອງ ແຂວງ;
2. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ປະສານສົມທົບ ກັບ ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການໃນການຄຸ້ມຄອງປ່າໄມ້, ປ່າປ້ອງກັນ, ປ່າສະຫງວນຂອງເມືອງ;
3. ໜ່ວຍງານປ່າໄມ້ບ້ານ ປະສານສົມທົບ ກັບ ພາກສ່ວນກ່ຽວຂ້ອງ ແລະ ອົງການຈັດຕັ້ງພາຍໃນບ້ານ, ກຸ່ມບ້ານ ເປັນເຈົ້າການໃນການຄຸ້ມຄອງປ່າສະຫງວນຂອງບ້ານ, ປ່າຊົມໃຊ້ຂອງບ້ານ, ປ່າມະເຫສັກ ແລະ ເນື້ອທີ່ປ່າອື່ນໆຂອງບ້ານ;

ແຂວງສາລະວັນ ມີເນື້ອທີ່ປ່າໄມ້ທັງໝົດ 684.438 ເຮັກຕາ ຊຶ່ງປະກອບມີປ່າແຕ່ລະປະເພດລະອຽດລຸ່ມນີ້ :

1. ປ່າສະຫງວນແຫ່ງຊາດ 3 ແຫ່ງມີເນື້ອທີ່ຄຸ້ມຄອງທັງໝົດ 250.731 ເຮັກຕາ;
2. ປ່າປ້ອງກັນແຫ່ງຊາດ 6 ແຫ່ງ ມີເນື້ອທີ່ຄຸ້ມຄອງ 221,402 ເຮັກຕາ
3. ປ່າຜະລິດແຫ່ງຊາດ 2 ແຫ່ງ ມີເນື້ອທີ່ຄຸ້ມຄອງທັງໝົດ 136.352 ເຮັກຕາ
4. ການຄຸ້ມຄອງປ່າປ້ອງກັນຂອງແຂວງ ແລະ ປ່າສະຫງວນຂອງເມືອງ ໃນເນື້ອທີ່ 27.953 ເຮັກຕາ
5. ເນື້ອທີ່ນອກ 3 ປະເພດປ່າ(ປ່າສະຫງວນ, ປ່າຜະລິດ ແລະ ປ່າປ້ອງກັນ) ໃນ 8 ຕົວເມືອງ ໃນເນື້ອທີ່ 48.000 ເຮັກຕາ.

### ມາດຕາ 9 ການສຳຫຼວດປ່າໄມ້

ພະແນກກະສິກຳ ແລະ ປ່າໄມ້ແຂວງເປັນເຈົ້າການປະສານສົມທົບ ກັບ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ໃນການສຳຫຼວດປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເພື່ອວາງແຜນຄຸ້ມຄອງ, ປົກ

ປົກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້ແບບຍືນຍົງ ໂດຍສະເພາະແມ່ນ ການສຳຫຼວດກ່ອນການຂຸດຄົ້ນໄມ້, ການສຳຫຼວດໝາຍຕົ້ນຕັດ, ການສຳຫຼວດໄມ້ໃນເຂດກໍ່ສ້າງພື້ນຖານໂຄງລ່າງອື່ນໆ ແລະ ສຳຫຼວດກວດກາຄືນເນື້ອທີ່ດິນປ່າໄມ້ໃນ ສາມປະເພດປ່າທີ່ກວມເອົາການກໍ່ສ້າງບ້ານເຮືອນປະຊາຊົນ ຫຼື ເນື້ອທີ່ທຳການຜະລິດຂອງປະຊາຊົນ ເພື່ອກຳນົດຂອບເຂດ, ປັກຫຼັກໝາຍ, ສ້າງແຜນທີ່ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້ ແລະ ເຂົ້າຮ່ວມຊຸກຍູ້, ຊ່ວຍເຫຼືອທາງດ້ານວິຊາການຮ່ວມ ກັບ ພາກສ່ວນກ່ຽວຂ້ອງສັງລວມ, ວິເຄາະ, ສ້າງແຜນຈັດສັນ ແລະ ເກັບຮັກສາຂໍ້ມູນ ເພື່ອເປັນຂໍ້ມູນໃຫ້ແກ່ການຈັດຕັ້ງປະຕິບັດປົກປັກຮັກສາປ່າໄມ້ໃນອະນາຄົດ.

## ມາດຕາ 10 ການວາງແຜນຈັດສັນປ່າໄມ້

ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນໃຈກາງໃນການປະສານສົມທົບ ກັບ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ອົງການປົກຄອງທ້ອງຖິ່ນ ເພື່ອດຳເນີນການສຳຫຼວດເກັບກຳຂໍ້ມູນຕົວຈິງກຳນົດເອົາເຂດທີ່ສາມາດຂຸດຄົ້ນໄມ້, ເຂດປ່າຟື້ນຟູ, ເຂດປ່າປູກ, ເຂດອະນຸລັກ ແລະ ເຂດປົກປັກຮັກສາສິ່ງແວດລ້ອມ ແນໃສ່ຮັບປະກັນຄວາມສົມດຸນຂອງລະບົບນິເວດປ່າໄມ້, ການນຳໃຊ້ປ່າໄມ້ ແລະ ເຄື່ອງປ່າຂອງດົງແບບຍືນຍົງ ໂດຍການມີສ່ວນຮ່ວມຈາກປະຊາຊົນບັນດາເຜົ່າ ໃນການຄຸ້ມຄອງປ່າໄມ້ຕາມແຜນຈັດສັນທີ່ກຳນົດໄວ້.

## ມາດຕາ 11 ການກຳນົດເຂດປ່າໄມ້

ພະແນກກະສິກຳ ແລະ ປ່າໄມ້ແຂວງເປັນໃຈກາງໃນການປະສານສົມທົບກັບບັນດາພະແນກການ , ເມືອງ ແລະ ອຳນາດການປົກຄອງບ້ານ ເພື່ອລົງສຳຫຼວດຈັດສັນ, ກຳນົດແບ່ງເຂດ ແລະ ປັກຫຼັກ, ໝາຍຂອບເຂດ ເນື້ອທີ່ປ່າສະຫງວນແຫ່ງຊາດ, ປ່າປ້ອງກັນແຫ່ງຊາດ, ປ່າປ້ອງກັນຂອງແຂວງ, ປ່າປ້ອງກັນຂອງເມືອງ ແລະ ປ່າສະຫງວນຂອງເມືອງໃຫ້ລະອຽດຊັດເຈນ ເພື່ອວາງແຜນຄຸ້ມຄອງປ່າງເໝາະສົມ ເຊັ່ນ: ເຂດປ່າໄມ້ເພື່ອປ້ອງກັນແຫຼ່ງນ້ຳ , ສິ່ງແວດລ້ອມ, ເຂດປ່າໄມ້ເພື່ອສະຫງວນ ໄວ້ສຳລັບການສຶກສາຄົ້ນຄວ້າ, ແຫຼ່ງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ - ສັງຄົມ, ເຂດປ່າໄມ້ ທີ່ມີທ່າແຮງສາມາດກາຍເປັນປ່າຄືນໄດ້ ແລະ ເຂດປ່າໄມ້ອື່ນໆ.

## ມາດຕາ 12 ການຫັນປ່ຽນທີ່ດິນປ່າໄມ້

ການຫັນປ່ຽນທີ່ດິນປ່າໄມ້ ເປັນທີ່ດິນປະເພດອື່ນທີ່ຜົນປະໂຫຍດສູງສຸດໃຫ້ແກ່ຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນທີ່ກຳນົດໄວ້ແຜນນຳໃຊ້ທີ່ດິນຂອງຂະແໜງການ ແລະ ທ້ອງຖິ່ນ ໂດຍບໍ່ມີຜົນກະທົບທີ່ຮ້າຍແຮງຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ການຫັນປ່ຽນທີ່ດິນປ່າໄມ້ມີ ລັກສະນະຊົ່ວຄາວ ແລະ ລັກສະນະຖາວອນ;

ລັກສະນະຖາວອນ ແ ່ມນການຫັນປ່ຽນທີ່ດິນປ່າໄມ້ໄປເປັນທີ່ດິນປະເພດອື່ນ ເພື່ອຮັບໃຊ້ຈຸດປະສົງໃດໜຶ່ງທີ່ຍາວນານເປັນຕົ້ນການສ້າງເຂື່ອນໄຟຟ້າ, ອ່າງເກັບນ້ຳ, ຕົບເສົາເຄື່ອງສົ່ງສັນຍານໂທລະສັບ ຫຼື ການຈັດສັນພູມລຳເນົາ ແລະ ອື່ນໆ;

ລັກສະນະຊົ່ວຄາວແມ່ນການຫັນປ່ຽນທີ່ດິນປ່າໄມ້ໄປເປັນທີ່ດິນປະເພດອື່ນເພື່ອດຳເນີນກິດຈະການໃດໜຶ່ງທີ່ມີໄລຍະສັ້ນເປັນຕົ້ນ ການຂຸດຄົ້ນບໍ່ແຮ່, ເສັ້ນທາງເຂົ້າຫາເຂດກໍ່ສ້າງ ພາຍຫຼັງສິ້ນສຸດແລ້ວ ທີ່ດິນທີ່ຫັນປ່ຽນນັ້ນກໍ່ຕ້ອງຄືນມາເປັນທີ່ດິນປ່າໄມ້ເໝືອນເດີມ;

ສະພາປະຊາຊົນຂັ້ນແຂວງຕົກລົງຫັນປ່ຽນປະເພດທີ່ດິນປ່າໄມ້ເປັນທີ່ດິນປະເພດອື່ນຕາມການສະເໜີຂອງອົງການປົກຄອງແຂວງດັ່ງນີ້:

1. ການຫັນປ່ຽນທີ່ດິນປ່າປ້ອງກັນ, ປ່າສະຫງວນຂັ້ນບ້ານ;
2. ການຫັນປ່ຽນທີ່ດິນປ່າຊຸດໂຊມ ທີ່ບໍ່ສາມາດຟື້ນຟູດ້ວຍຕົວມັນເອງໄດ້ ເນື້ອທີ່ຕ່ຳກວ່າໜຶ່ງຮ້ອຍເຮັກຕາ ຕໍ່ໜຶ່ງກິດຈະການເທົ່ານັ້ນ;
3. ການຫັນປ່ຽນທີ່ດິນປ່າປອກໂຫຼ້ນ ເນື້ອທີ່ຕ່ຳກວ່າສອງຮ້ອຍເຮັກຕາຕໍ່ໜຶ່ງກິດຈະການເທົ່ານັ້ນ.

### ມາດຕາ 13 ການສຳຫຼວດເພື່ອການຂຸດຄົ້ນເຄື່ອງປ່າຂອງດົງ

ພະແນກກະສິກຳ ແລະ ປ່າໄມ້ ເປັນເສນາທິການໃນການປະສານສົມທົບ ກັບ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ພາກສ່ວນກ່ຽວຂ້ອງລົງສຳຫຼວດ, ເກັບກຳຂໍ້ມູນທາງດ້ານຊະນິດ, ບໍລິມາດ, ຈຳນວນເຄື່ອງປ່າຂອງດົງຢູ່ໃນ ແລະ ນອກ 3 ປະເພດປ່າ ແລະ ເຂດທີ່ຫັນປ່ຽນທີ່ດິນປ່າໄມ້ທີ່ແຂວງອະນຸຍາດ ໃຫ້ສຳຫຼວດ ແລ້ວສັງລວມເອົາເຂົ້າແຜນປະຈຳປີ ເພື່ອຂໍອະນຸຍາດຂຸດຄົ້ນເຄື່ອງປ່າຂອງດົງຈາກການເຫັນດີຂອງແຂວງ, ກົມປ່າໄມ້ ແລະ ກະຊວງກະສິກຳ ແລະ ປ່າໄມ້.

### ມາດຕາ 14 ການສ້າງ ແລະ ການອະນຸມັດແຜນການຂຸດຄົ້ນເຄື່ອງປ່າຂອງດົງ

ສ້າງແຜນການຂຸດຄົ້ນເຄື່ອງປ່າຂອງດົງ ປະຈຳປີ ໂດຍອີງໃສ່ຂໍ້ມູນການສຳຫຼວດແລ້ວ ຕາມມາດຕາ 13 ຂອງຂໍ້ຕົກລົງສະບັບນີ້ ແລະ ເປັນຜູ້ອະນຸມັດຂຸດຄົ້ນເຄື່ອງປ່າຂອງດົງ ບົນພື້ນຖານການເຫັນດີຂອງອົງການປົກຄອງແຂວງ ແລະ ຮັບປະກັນຄວາມຍືນຍົງ ຕາມຂໍ້ຕົກລົງຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0279/ກປ; ລົງວັນທີ 19 ກຸມພາ 2020 ມີເຄື່ອງປ່າຂອງດົງ ບັນຊີ II ໃນຈຳນວນ 54 ຊະນິດ ເຊັ່ນ: ໝາກຈອງບານ, ກົງສະເດັນ, ຂີ້ເໝັ້ນຕົ້ນ, ຕົ້ນບີຄືນ, ຕົ້ນກະໂດນນ້ຳ, ເປືອກໂບງ, ຫວາຍໂຕ່ນ, ຫວາຍຫອມ ແລະ ເຄື່ອງປ່າຂອງດົງ ບັນຊີ III, ໃນຈຳນວນ 165 ຊະນິດ ເຊັ່ນ : ກຳລັງເສືອໂຄ່ງ, ແຂມ, ຫົວຊີຄືນ, ເຫັດ , ໜໍ່ສານ.

### ມາດຕາ 15 ການສ້າງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ

ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານເພື່ອຈັດສັນປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດການປົກຄອງຂອງບ້ານ ຊຶ່ງດຳເນີນຢູ່ໃນ ແລະ ນອກເຂດປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ເພື່ອໃຫ້ບ້ານເປັນເຈົ້າການໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້, ປູກ ແລະ ຟື້ນຟູປ່າທີ່ຊຸດໂຊມ, ຕ້ານ ແລະ ສະກັດກັ້ນໄຟໄໝ້ລາມປ່າ, ການລັກລອບຕັດໄມ້, ການບຸກລຸກເນື້ອທີ່ດິນປ່າໄມ້ ແລະ ເຄື່ອງປ່າຂອງດົງປະເພດຫວງຫ້າມເພື່ອເຮັດໃຫ້ສະພາບປ່າໄມ້ທີ່ນອນຢູ່ນອກ 3 ປະເພດປ່າ ມີຄວາມອຸດົມສົມບູນ.

ມາດຕາ 16 ການຄຸ້ມຄອງຕົ້ນໄມ້ໃນຕົວເມືອງ ແລະ ໃນທີ່ດິນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ

ຕົ້ນໄມ້ທີ່ເກີດໃນທຳມະຊາດ ໃນດິນໄຮ່, ດິນນາ, ດິນສວນ, ທີ່ດິນປູກສ້າງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໄດ້ອອກສິດນຳໃຊ້ຢ່າງຖືກຕ້ອງຕາມກົດໝາຍ, ທີ່ໄດ້ອອກແຮງຄຸ້ມຄອງປົກປັກຮັກສາ ການຕັດໄມ້ໃນເຂດດັ່ງກ່າວຕ້ອງໄດ້ສະເໜີຫາຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອນຳສະເໜີຫາ ພະແນກກະສິກຳ ແລະ ປ່າໄມ້ ສົມທົບ ກັບ ພາກສ່ວນກ່ຽວຂ້ອງ ພິຈາລະນາແກ້ໄຂ;

ສຳລັບຕົ້ນໄມ້ທີ່ປູກຕາມແລວທາງ ເຂດເທດສະບານເມືອງ ແມ່ນອົງການປົກຄອງເມືອງ ເປັນໃຈກາງໃນການຄຸ້ມຄອງ, ປົກປັກຮັກສາຕົ້ນໄມ້.

ມາດຕາ 17 ການຄຸ້ມຄອງປ່າປູກ, ໄມ້ປູກ ແລະ ປ່າຟື້ນຟູ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຈຸດປະສົງຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນໄມ້ປູກ ເພື່ອຢັ້ງຢືນກຳມະສິດ ແລະ ແຫຼ່ງທີ່ມາຂອງໄມ້ປູກ ເພື່ອສະດວກໃນການຄຸ້ມຄອງດັ່ງນີ້:

1. ອົງການປົກຄອງບ້ານເປັນຜູ້ອອກໃບຢັ້ງຢືນສຳລັບປ່າປູກ ທີ່ມີເນື້ອທີ່ຕ່ຳກວ່າໜຶ່ງພັນຫົກຮ້ອຍຕາແມັດ ຫຼື ປູກແບບກະແຈກກະຈາຍ;
2. ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ເປັນຜູ້ອອກໃບທະບຽນປ່າປູກ ທີ່ມີເນື້ອທີ່ ໜຶ່ງພັນຫົກຮ້ອຍຕາແມັດ ຫາ ຫ້າ ເຮັກຕາ;
3. ພະແນກກະສິກຳ ແລະ ປ່າໄມ້ແຂວງເປັນຜູ້ອອກທະບຽນປ່າປູກທີ່ມີເນື້ອທີ່ ຫ້າ ເຮັກຕາ ຂຶ້ນໄປ.

ມາດຕາ 18 ການປະກອບເອກະສານການຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນໄມ້ປູກ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີຈຸດປະສົງຂຶ້ນທະບຽນປ່າປູກ ແລະ ຢັ້ງຢືນໄມ້ປູກ ຕ້ອງປະຕິບັດດັ່ງນີ້ :

1. ປ່າປູກ ແລະ ໄມ້ປູກຂອງ ບຸກຄົນ ຕ້ອງປະກອບເອກະສານຄື:
- ຄຳຮ້ອງ ຂໍຂຶ້ນທະບຽນປ່າປູກ;
- ສຳເນົາ ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ;
- ສຳເນົາ ໃບຢັ້ງຢືນກຳມະສິດໃນການຄອບຄອງ ແລະ ນຳໃຊ້ທີ່ດິນ (ໃບຕາດິນ,ໃບສັນຍາເຊົ່າ ຫຼື ໃບສຳປະທານທີ່ດິນ).

2. ປ່າປູກ ແລະ ໄມ້ປູກ ຂອງ ນິຕິບຸກຄົນ ຕ້ອງປະກອບເອກະສານຄື:
- ຄຳຮ້ອງ ຂໍຂຶ້ນທະບຽນປ່າປູກ;
- ສຳເນົາ ໃບຢັ້ງຢືນກຳມະສິດໃນການຄອບຄອງ ແລະ ສິດນຳໃຊ້ທີ່ດິນ (ໃບຕາດິນ, ໃບສັນຍາເຊົ່າ ຫຼື ໃບສຳປະທານທີ່ດິນ);
- ສຳເນົາ ໃບອະນຸຍາດ ດຳເນີນກິດຈະການກະສິກຳ ແລະ ປ່າໄມ້, ໃບທະບຽນວິສາຫະກິດ, ຖ້າແມ່ນການລົງທຶນໂດຍກົງຈາກຕ່າງປະເທດໃຫ້ສຳເນົາໃບອະນຸຍາດລົງທຶນຄັດຕິດມາພ້ອມ).

3. ປ່າປູກ ແລະ ໄມ້ປູກ ຂອງອົງການຈັດຕັ້ງ ປະກອບຄື:
- ຄຳຮ້ອງ ຂໍຂຶ້ນທະບຽນປ່າປູກ;
- ສຳເນົາ ໃບອະນຸຍາດສ້າງຕັ້ງການຈັດຕັ້ງ;
- ສຳເນົາ ໃບຢັ້ງຢືນກຳມະສິດໃນການຄອບຄອງ ແລະ ນຳໃຊ້ທີ່ດິນເປັນຂອງການຈັດຕັ້ງ.

# ໝວດທີ 3

# ການປົກປັກຮັກສາປ່າໄມ້

**ມາດຕາ 19 ການປົກປັກຮັກສາປ່າໄມ້**

ການປົກປັກຮັກສາປ່າໄມ້ ປະກອບມີ ດັ່ງນີ້:

- ການປົກປັກຮັກສາປ່າສະຫງວນ;
- ການປົກປັກຮັກສາປ່າປ້ອງກັນ;
- ການປົກປັກຮັກສາປ່າຜະລິດ;
- ການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ;
- ການປົກປັກຮັກສາພັນໄມ້ ແລະ ເຄື່ອງປ່າຂອງດົງ
- ການກັນ, ການຕ້ານພະຍາດບົ້ງແມງ ແລະ ເຄື່ອງປ່າຂອງດົງ

**ມາດຕາ 20 ການປົກປັກຮັກສາປ່າສະຫງວນ**

ການປົກປັກຮັກສາປ່າສະຫງວນ ຢູ່ແຂວງສາລະວັນ ໃຫ້ປະຕິບັດຂັ້ນຕອນ ດັ່ງນີ້ :

1. ການສຳຫຼວດເຂດຫວງຫ້າມເດັດຂາດ, ເຂດເຊື່ອມຕໍ່, ເຂດຄຸ້ມຄອງນຳໃຊ້ ແລະ ເຂດກັນຊົນໃຫ້ມີຄວາມຊັດເຈນ ແລະ ສຳເລັດໂດຍໄວ ບົນພື້ນຖານການເຫັນດີ ເປັນເອກະພາບ ກັບ ຂະແໜງການກ່ຽວຂ້ອງອຳນາດການປົກຄອງບ້ານ ໂດຍການມີສ່ວນຮ່ວມ ຂອງ ປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນ ແລະ ອ້ອມຂ້າງປ່າສະຫງວນ ແລ້ວສ້າງແຜນການຄຸ້ມຄອງແຕ່ລະເຂດ;
2. ສ້າງລະບຽບການ ໃນການຄຸ້ມຄອງເຂດຫວງຫ້າມເດັດຂາດ, ເຂດເຊື່ອມຕໍ່ ຫັນໄປສູ່ການສະຫງວນຢ່າງເດັດຂາດ, ການເກັບກູ້ເຄື່ອງປ່າຂອງດົງ ເພື່ອໃຊ້ສອຍພາຍໃນຄອບຄົວສາມາດເກັບກູ້ໄດ້ຢູ່ໃນເຂດຄຸ້ມຄອງນຳໃຊ້ ແລະ ເຂດກັນຊົນບົນພື້ນຖານ ຫຼັກການຄຸ້ມຄອງນຳໃຊ້ແບບຍືນຍົງ ແລະ ບໍ່ດັບສູນ;
3. ກວດກາລາດຕະເວນ ເພື່ອສະກັດກັ້ນໄຟໄໝ້ລາມປ່າ, ການລັກລອບຕັດໄມ້, ການເກັບກູ້ເຄື່ອງປ່າຂອງດົງ, ການລ່າສັດນ້ຳ - ສັດປ່າ, ການບຸກລຸກຈັບຈອງ ເນື້ອທີ່ດິນເຂດ ປ່າສະຫງວນ ແລະ ການກະທຳອື່ນໆ ທີ່ເຫັນວ່າຜິດຕໍ່ລະບຽບກົດໝາຍ ແຕ່ລະວັນຕາມການລາຍງານຂອງປ່າໄມ້ບ້ານ.

**ມາດຕາ 21 : ການປົກປັກຮັກສາປ່າປ້ອງກັນ**

ການ ປົກປັກຮັກສາ ແລະ ນຳໃຊ້ປ່າປ້ອງກັນ ໃຫ້ປະຕິບັດ ດັ່ງນີ້:

1. ໃຫ້ຂະແໜງປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ , ອົງການປົກຄອງທ້ອງຖິ່ນ ສຳຫຼວດກຳນົດຂອບເຂດປ່າປ້ອງກັນໃຫ້ຊັດເຈນ;
2. ປັກຫຼັກໝາຍເຂດແດນ, ສ້າງລະບຽບການຄຸ້ມຄອງ ໂດຍວາງມາດຕະການ ໃນການປົກປັກຮັກສາ, ຟື້ນຟູປ່າໄມ້ ແບບທຳມະຊາດ ແລະ ແບບປູກເສີມ ໃນພື້ນທີ່ປ່າຊຸດໂຊມ ແລະ ດິນປອກໂຫຼ້ນ ໂດຍການມີສ່ວນຮ່ວມຂອງປະຊາຊົນ;

3. ການເກັບກູ້ເຄື່ອງປ່າຂອງດົງ ໃນເຂດປ່າປ້ອງກັນ ເພື່ອໃຊ້ສອຍພາຍໃນຄອບຄົວ ສາມາດດຳເນີນໄດ້ຢູ່ໃນເຂດຄຸ້ມຄອງນຳໃຊ້ ແລະ ເຂດກັນຊົນ ບົນພື້ນຖານລະບຽບຫຼັກການ ຄຸ້ມຄອງນຳໃຊ້ແບບຍືນຍົງ ແລະ ບໍ່ມີລັກສະນະດັບສູນ.

4. ກວດກາລາດຕະເວນ ເພື່ອສະກັດກັ້ນໄຟໃໝ້ລາມປ່າ, ການລັກລອບຕັດໄມ້, ການເກັບກູ້ເຄື່ອງປ່າຂອງດົງ, ການລ່າສັດນໍ້າ - ສັດປ່າ, ການບຸກລຸກຈັບຈອງ ເນື້ອທີ່ດິນເຂດປ່າປ້ອງກັນ ແລະ ການກະທຳອື່ນໆ ທີ່ເຫັນວ່າຜິດຕໍ່ລະບຽບກົດໝາຍ ແຕ່ລະວັນຕາມການລາຍງານຂອງປ່າໄມ້ບ້ານ.

ມາດຕາ 22 ການປົກປັກຮັກສາປ່າຜະລິດ

ການປົກປັກຮັກສາ ປ່າຜະລິດ ປະກອບມີບັນດາໜ້າວຽກ ດັ່ງນີ້:

1. ເຜີຍແຜ່ບັນດານິຕິກຳເຊັ່ນ: ກົດໝາຍ, ດຳລັດ, ຄຳສັ່ງ, ນິຕິກຳໃຕ້ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງປ່າຜະລິດໃຫ້ປະຊາຊົນໃນບັນດາບ້ານທີ່ນອນຢູ່ໃນ ແລະ ປະຊາຊົນທີ່ໃກ້ຄຽງເຂດປ່າຜະລິດ;
2. ສ້າງ, ຕິດຕັ້ງປ້າຍ ແລະ ປັກຫຼັກໝາຍເຂດແດນປ່າຜະລິດທີ່ຍັງບໍ່ທັນໄດ້ປະຕິບັດໃນໄລຍະຜ່ານມາໃຫ້ສຳເລັດ, ປັບປຸງເພີ່ມປ້າຍ ແລະ ປັກຫຼັກໝາຍເຂດແດນໃນເຂດທີ່ຕິດຕັ້ງໄວ້ແລ້ວ;
3. ສຳຫຼວດກຳນົດຂອບເຂດພື້ນທີ່ ຊ່ວຍຟື້ນຟູປ່າ ແບບທຳມະຊາດ ແລະ ປູກເສີມ, ພ້ອມທັງປັກຫຼັກໝາຍ ແລະ ຕິດປ້າຍບອກຂອບເຂດລະອຽດ;
4. ປັບປຸງຄືນລະບຽບການຄຸ້ມຄອງ, ປົກປັກຮັກສາ, ພື້ນທີ່ຟື້ນຟູປ່າແບບທຳມະຊາດ ແລະ ແບບປູກເສີມໂດຍການມີສ່ວນຮ່ວມ ກັບ ປະຊາຊົນ;
5. ສືບຕໍ່ປະຕິບັດກ່ຽວກັບການຄຸ້ມຄອງປ່າໄມ້ ລະຫວ່າງ ຫ້ອງການກະສິກຳ ແລະ ປ່າໄມ້ກັບບ້ານເພື່ອມອບຄວາມຮັບຜິດຊອບໃນການປົກປັກຮັກສາໃຫ້ບັນດາບ້ານທີ່ນອນໃນເຂດປ່າຜະລິດ;
6. ປັບປຸງຄືນຄະນະປ່າໄມ້ບ້ານ ສ້າງລະບຽບຮ່ວມໃນການຄຸ້ມຄອງປ່າໄມ້ຂັ້ນບ້ານ;
7. ຕິດຕາມ, ກວດກາ ເກັບກູ້ເຄື່ອງປ່າຂອງດົງ ເພື່ອໃຊ້ສອຍໃນຄອບຄົວ;
8. ຕິດຕາມ, ກວດກາ ແລະ ປົກປັກຮັກສາພື້ນທີ່ປ່າໄມ້ທີ່ມີຄຸນຄ່າສູງທາງດ້ານອະນຸລັກ.

ມາດຕາ 23 **ການປົກປັກຮັກສາພັນໄມ້ ແລະ ເຄື່ອງປ່າຂອງດົງ.**

ພະແນກກະສິກຳ ແລະ ປ່າໄມ້ແຂວງປະສານສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເຮັດໜ້າທີ່ຄຸ້ມຄອງປົກປັກຮັກສາ ແຫຼ່ງແກ່ນພັນໄມ້ ແລະ ເຄື່ອງປ່າຂອງດົງປະເພດໄມ້ຫວງຫ້າມ, ຫາຍາກ ແລະ ໃກ້ສູນພັນ ທີ່ລັດໄດ້ກຳນົດໄວ້ໃນບັນຊີ I ເພື່ອຮັກສາໃຫ້ມີການຂະຫຍາຍຕົວ ແລະ ຍືນຍົງຕ້ອງປະຕິບັດດັ່ງນີ້:

1. ຕ້ອງລົງສຳຫຼວດຂຶ້ນບັນຊີຊະນິດພັນໄມ້ ແລະ ເຄື່ອງປ່າຂອງດົງ ;
2. ກຳນົດເປັນເຂດແຫຼ່ງແກ່ນພັນໄມ້ , ຂຶ້ນບັນຊີພັນໄມ້, ຈົດທະບຽນພັນໄມ້ ແລະ ເຄື່ອງປ່າຂອງດົງ ທີ່ມີໃນແຕ່ລະເມືອງ;
3. ກຳນົດແຜນການອະນຸລັກ, ປົກປັກຮັກສາໂດຍການມີສ່ວນຮ່ວມຂອງປະຊາຊົນທ້ອງຖິ່ນ;
4. ປະຕິບັດກົດໝາຍ, ລະບຽບການ ແລະ ມາດຕະການໃນການປົກປັກຮັກສາ.

ມາດຕາ 24 ການກັນ, ການຕ້ານ ພະຍາດ ບົ້ງແມງ ແລະ ສັດຕູພືດອື່ນ.

ພະແນກກະສິກຳ ແລະ ປ່າໄມ້ແຂວງຕ້ອງເປັນໃຈກາງປະສານສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອຕ້ານ ແລະ ສະກັດກັ້ນບໍ່ໃຫ້ພະຍາດບົ້ງແມງ ແລະ ສັດຕູພືດອື່ນໆເກີດຂື້ນລະບາດໃນຕົ້ນໄມ້ປູກ ກໍ່ຄືໄມ້ທຳມະຊາດ ໃຫ້ໄດ້ຮັບປະສິດທິຜົນ ຕ້ອງປະຕິບັດດັ່ງນີ້:

1. ຕ້ອງລົງສຶກສາຂໍ້ມູນການເກີດ ແລະ ການລະບາດຂອງເຊື້ອພະຍາດໄມ້, ບົ້ງແມງ ແລະ ສັດຕູພືດອື່ນ;
2. ຈັດຕັ້ງການປ້ອງກັນ ແລະ ຄວບຄຸມການລະບາດພະຍາດໄມ້, ບົ້ງແມງ ແລະ ສັດຕູພືດອື່ນໆໃນເຂດປ່າທີ່ຕົນຮັບຜິດຊອບ;
3. ກຳນົດເຂດປອດພະຍາດ ແລະ ເຂດປ້ອງກັນ;
4. ສ້າງສູນການກັນ ແລະ ຕ້ານພະຍາດໄມ້, ບົ້ງແມງ ແລະ ສັດຕູພືດອື່ນ, ອອກໃບຢັ້ງຢືນການຄຸ້ມຄອງການຜະລິດ, ການແຈກຢາຍ ການນຳໃຊ້ແນວພັນໄມ້ທີ່ປອດພະຍາດ.

ມາດຕາ 25 ການສະກັດກັ້ນ ແລະ ຕ້ານໄຟໄໝ້ປ່າ

ເພື່ອສືບຕໍ່ຍູ້ແຮງຄວາມຮັບຮູ້ ເຂົ້າໃຈຢ່າງເລິກເຊິ່ງ ແລະ ຮັບປະກັນຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດວຽກງານ ຕ້ານ ແລະ ສະກັດກັ້ນໄຟໄໝ້ປ່າ ໃຫ້ຂະແໜງປ່າໄມ້, ກອງຄຸ້ມຄອງປ່າສະຫງວນ, ກອງກວດກາປ່າໄມ້, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ບ້ານ ຕ້ອງ ປະຕິບັດດັ່ງນີ້:

1. ເກັບກຳຂໍ້ມູນ, ກຳນົດເຂດທີ່ມີຄວາມສ່ຽງ ເພື່ອວາງແຜນສະກັດກັ້ນ ແລະ ຕ້ານໄຟໄໝ້ລາມປ່າລວມທັງວຽກງານຕິດຕາມ ເຝົ້າລະວັງ ໃນແຕ່ລະໄລຍະ ໃຫ້ທັນລະດູການ;
2. ຈັດຕັ້ງໜ່ວຍງານສະເພາະກິດ, ປະກອບ, ວັດຖຸອຸປະກອນ, ພາຫະນະ ເພື່ອລົງກວດກາລາດຕະເວນ, ເຝົ້າລະວັງ ແລະ ສະກັດກັ້ນໄຟໄໝ້ລາມປ່າ ພ້ອມທັງວາງມາດຕະການແກ້ໄຂ ແລະ ປະສານສົມທົບ ກັບ ພາກສ່ວນກ່ຽວຂ້ອງ ໃຫ້ທັນການເມື່ອມີເຫດການໄຟໄໝ້ປ່າ ເກີດຂຶ້ນໃນຄວາມຮັບຜິດຊອບຂອງຕົນ ສອງຄັ້ງຕໍ່ ໜຶ່ງເດືອນ;
3. ຈັດຕັ້ງຄະນະກຳມະການຂັ້ນເມືອງ ແລະ ບ້ານເພື່ອເຮັດໜ້າທີ່ ລົງໂຄສະນາເຜີຍແຜ່ ແນະນຳເຕັກນິກວິຊາການ , ຕິດຕາມ, ເຝົ້າລະວັງ, ມາດຕະການ, ສະກັດກັ້ນ ຕ້ານໄຟໄໝ້ລາມປ່າໃຫ້ປະຊາຊົນ ທີ່ອາໄສຢູ່ໃນ ແລະ ນອກປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດ ບ່ອນທີ່ທຳການຜະລິດ (ເຮັດໄຮ່, ເຮັດສວນ) ແລະ ເຂດທຳມາຫາກິນ.

ມາດຕາ 26 ການຈຳກັດການຖາງປ່າເຮັດໄຮ່ແບບເລື່ອນລອຍ.

ອົງການປົກຄອງແຂວງເປັນໃຈກາງໃນການປະສານສົມທົບກັບພະແນກການກ່ຽວຂ້ອງໃນການລົງຊຸກຍູ້, ໂຄສະນາ, ເຜີຍແຜ່ລະບຽບກົດໝາຍ ທີ່ກ່ຽວຂ້ອງໃຫ້ປະຊາຊົນຮັບຮູ້ ແລະ ເຂົ້າໃຈ ແລະ ພ້ອມກັນຢຸດເຊົາການຖາງປ່າເຮັດໄຮ່ ເພື່ອຫັນມາເຮັດອາຊີບຄົງທີ່.

# ໝວດທີ 4
# ການຟື້ນຟູປ່າໄມ້ ແລະ ປູກໄມ້

### ມາດຕາ 27 ການຟື້ນຟູປ່າໄມ້

ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນໃຈກາງໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ໃນການວາງແຜນຄຸ້ມຄອງ, ປົກປັກຮັກພື້ນທີ່ປ່າໄມ້ທຳມະຊາດທີ່ມີສະພາບຊຸດໂຊມຍ້ອນການຖາງປ່າເພື່ອທຳການຜະລິດ, ການຂຸດຄົ້ນໄມ້ໃນໄລຍະຜ່ານມາ ໃຫ້ກາຍເປັນປ່າໄມ້ທີ່ອຸດົມສົມບູນຄືນໃໝ່ ປະກອບດ້ວຍຊະນິດພັນໄມ້ທີ່ມີຄຸນຄ່າທາງດ້ານເສດຖະກິດ ແລະ ປົກປັກຮັກສາສິ່ງແວດລ້ອມ, ແຫຼ່ງນ້ຳ, ດິນ, ສັດນ້ຳ-ສັດປ່າ.

### ມາດຕາ 28 ການກຳນົດເຂດປູກໄມ້ ແລະ ຟື້ນຟູໄມ້

ການກຳນົດເຂດຟື້ນຟູປ່າໄມ້ ແລະ ປູກໄມ້ ປະຕິບັດດັ່ງນີ້:

ພະແນກກະສິກຳ ແລະ ປ່າໄມ້ແຂວງ ຕ້ອງປະສານສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອລົງສຳຫຼວດຄືນເຂດປ່າປອກໂຫຼ້ນ ແລະ ປ່າຊຸດໂຊມ ໃນປ່າສະຫງວນ, ປ່າປ້ອງກັນ ແລະ ປ່າຜະລິດທີ່ມີທ່າແຮງສາມາດກາຍເປັນປ່າຄືນໃໝ່ໄດ້ ໂດຍການຟື້ນຟູດ້ວຍການປູກເສີມກ້ອງປ່າ ແລະ ຟື້ນຟູດ້ວຍໂຕມັນເອງຕາມທຳມະຊາດ ພ້ອມທັງວາງລະບຽບການຢ່າງລະອຽດ, ການປົກປັກຮັກສາ, ການບົວລະບັດ, ການກວດກາ ແລະ ການຕິດຕາມປະເມີນຜົນໃນແຕ່ລະປີ;

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງຕ້ອງຟື້ນຟູໃນເນື້ອທີ່ປ່າທີ່ປອກໂຫຼ້ນ ແລະ ປ່າຊຸດໂຊມ ໃນປ່າປ້ອງກັນ ແລະ ປ່າສະຫງວນຂອງເມືອງທີ່ມີທ່າແຮງສາມາດກາຍເປັນປ່າຄືນໃໝ່ໄດ້ ໂດຍການຟື້ນຟູດ້ວຍການປູກເສີມກ້ອງປ່າ ແລະ ຟື້ນຟູດ້ວຍໂຕມັນເອງຕາມທຳມະຊາດ ພ້ອມທັງສ້າງລະບຽບການຄຸ້ມຄອງ, ບົວລະບັດຮັກສາ, ກວດກາ ແລະ ປະເມີນອັດຕາການລອດຕາຍຂອງຕົ້ນໄມ້ ໃນແຕ່ລະປີ ;

ບ້ານຈະຕ້ອງປູກຕາມປ່າສະຫງວນ ແລະ ປ່າປ້ອງກັນ, ປ່າຊົມໃຊ້ ແລະ ປ່າມະເຫສັກຂອງບ້ານທີ່ມີທ່າແຮງສາມາດກາຍເປັນປ່າໄດ້( ບໍລິສັດ ແລະ ພາກສ່ວນລັດເປັນຜູ້ຕອບສະໜອງເບ້ຍໄມ້ໃຫ້ ສ່ວນການບົວລະບັດຮັກສາແມ່ນມອບໃຫ້ບ້ານ)ແລະ ບຸກຄົນ ແມ່ນປູກຕາມເນື້ອທີ່ຕາມໄຮ່, ນາ, ຮົ້ວ, ສວນ ທີ່ມີທະບຽນນຳໃຊ້ທີ່ດິນ (ໃບຕາດິນ) .

ໃນກໍລະນີທີ່ປູກໄມ້ຕາມໂຮງຮຽນ, ໂຮງໝໍ, ວັດ ແລະ ສະຖານທີ່ອື່ນໆ ແມ່ນມອບຄວາມຮັບຜິດຊອບໃຫ້ສະຖານທີ່ນັ້ນເປັນຜູ້ຄຸ້ມຄອງ, ບົວລະບັດຮັກສາ, ກວດກາ ແລະ ຕິດຕາມອັດຕາການລອດຕາຍ ເພື່ອປູກທົດແທນຄືນໃນປີຕໍ່ໄປ.

### ມາດຕາ 29 ແຜນການຟື້ນຟູປ່າໄມ້ ແລະ ການປູກໄມ້

ພະແນກກະສິກຳ ແລະ ປ່າໄມ້ແຂວງ ຮັບຜິດຊອບໂດຍກົງໃນການວາງແຜນຟື້ນຟູປ່າໄມ້ ແລະ ປູກໄມ້ ໂດຍສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການກ່ຽວຂ້ອງຮັບຜິດຊອບ ຂຶ້ນແຜນຟື້ນຟູປ່າໄມ້ ແລະ ປູກປ່າໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ຢ່າງລະອຽດກ່ຽວກັບຈຸດປະສົງ, ເປົ້າໝາຍຂອງການຟື້ນຟູໃນແຕ່ລະປະເພດປ່າ ໃຫ້ບົ່ງແຈ້ງພັນໄມ້ ທີ່ຈະປູກ, ສະຖານທີ່, ເນື້ອທີ່ ແລະ ທຶນ ລວມທັງຜູ້ຈະດຳເນີນການປູກ, ຟື້ນຟູ ແລະ ບົວລະບັດຮັກສາ.

ມາດຕາ 30 ການສົ່ງເສີມການຟື້ນຟູປ່າໄມ້

ຊຸກຍູ້ສົ່ງເສີມ ບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນເຂົ້າໃນວຽກງານຟື້ນຟູປ່າໄມ້ ໂດຍມີນະໂຍບາຍອັນເໝາະສົມເຊັ່ນ: ຕອບສະໜອງທາງດ້ານຊະນິດພັນໄມ້, ເຕັກນິກວິຊາການ ແລະ ໃຫ້ການຝຶກອົບຮົມໃນວຽກຟື້ນຟູປ່າໄມ້.

## ໝວດທີ 5

## ອົງການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ຟື້ນຟູປ່າໄມ້

ມາດຕາ 31 ອົງການຄຸ້ມຄອງປ່າໄມ້

ອົງການປົກຄອງແຂວງສາລະວັນ ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບທົ່ວແຂວງ ໂດຍມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງເປັນເຈົ້າການໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງຄຸ້ມຄອງ ອົງການຄຸ້ມຄອງປ່າໄມ້ປະກອບມີ:

1. ພະແນກກະສິກຳ ແລະ ປ່າໄມ້(ຂະແໜງປ່າໄມ້);
2. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (ໜ່ວຍງານປ່າໄມ້);
3. ອົງການປົກຄອງບ້ານ(ຕາໜ່າງປ່າໄມ້ບ້ານ).

ມາດຕາ 32 ສິດ ແລະ ໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້

ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ຟື້ນຟູປ່າໄມ້ ພະແນກກະສິກຳ ແລະ ປ່າໄມ້ມີສິດ ແລະ ໜ້າທີ່ຕາມຄວາມຮັບຜິດຊອບຂອງຕົນດັ່ງນີ້:

1. ເປັນເສນາທິການໃຫ້ແກ່ອົງການປົກຄອງແຂວງ ໃນການປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້, ສ້າງ ແລະ ປັບປຸງແຜນຍຸດທະສາດປ່າໄມ້ຂັ້ນແຂວງ;
2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ແນວທາງ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ນິຕິກຳ, ສົນທິສັນຍາ, ສັນຍາສາກົນ ທີ່ ສປປ ລາວເປັນພາຄີກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;
3. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້, ການປູກໄມ້, ຟື້ນຟູປ່າໄມ້ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;
4. ຄົ້ນຄວ້າ ແລະ ມີຄຳເຫັນ ກ່ຽວກັບການລົງທຶນດ້ານທຸລະກິດປ່າໄມ້, ການຂໍອະນຸຍາດນຳໃຊ້, ເຊົ່າ ຫຼື ສຳປະທານທີ່ດິນປ່າໄມ້ ເພື່ອສະເໜີຕໍ່ກະຊວງກະສິກຳ ແລະ ປ່າໄມ້ ພິຈາລະນາ;
5. ອອກໃບອະນຸຍາດຂຸດຄົ້ນໄມ້, ເຄື່ອງປ່າຂອງດົງ ຕາມແຈ້ງການຂອງກະຊວງກະສິກຳ ແລະ ປ່າໄມ້ ບົນພື້ນຖານການຕົກລົງຂອງລັດຖະບານ;
6. ຄຸ້ມຄອງໄມ້ ແລະ ເຄື່ອງປ່າຂອງດົງທຸກປະເພດທີ່ບໍ່ທັນໄດ້ປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ;
7. ເກັບກຳ, ສັງລວມ, ຄຸ້ມຄອງ ແລະ ນຳໃຊ້ຂໍ້ມູນຂ່າວສານກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້;
8. ສ້າງແຜນ, ຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ແລະ ເຄື່ອງປ່າຂອງດົງ;

9. ປະສານສົມທົບ ກັບອົງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້ເປັນຕົ້ນການສຳຫຼວດ, ການຈັດສັນ, ການອະນຸຍາດນຳໃຊ້, ເຊົ່າ ຫຼື ສຳປະທານ;
10. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານກ່ຽວກັບປ່າໄມ້ ແລະ ທີ່ດິນປ່າໄມ້ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງຂັ້ນແຂວງຊາບຢ່າງເປັນປົກກະຕິ;

ມາດຕາ 33 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ

1. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມແນວທາງ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ສົນທິສັນຍາ ແລະ ສັນຍາສາທິ ສປປ ລາວເປັນພາຄີກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;
2. ຊີ້ນຳ, ຍູກຍູ້, ຕິດຕາມ, ກວດກາ ການປະຕິບັດວຽກງານຂອງຈຸງານກະສິກຳ ແລະ ປ່າໄມ້ບ້ານ ເປັນຕົ້ນການປົກປັກຮັກສາປ່າໄມ້, ການປູກ, ການຟື້ນຟູປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ;
3. ແຕ່ງຕັ້ງຄະນະປ່າໄມ້ຂັ້ນບ້ານຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ແລະ ດິນປ່າໄມ້ ໂດຍສົມທົບກັບອົງການປົກຄອງເມືອງ;
4. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບການຫັນປ່ຽນທີ່ດິນປ່າໄມ້ຕາມກົດໝາຍ;
5. ເກັບກຳ, ສັງລວມ,ຄຸ້ມຄອງ ແລະ ນຳໃຊ້ຂໍ້ມູນຂ່າວສານກ່ຽວປ່າໄມ້ ແລະ ທີ່ດິນປ່າໄມ້;
6. ສ້າງແຜນ , ຄຸ້ມຄອງ ແລະ ນຳໃຊ້ແຫຼ່ງແນວພັນໄມ້ ແລະ ເຄື່ອງປ່າຂອງດົງ;
7. ຮັບ ແລະ ພິຈາລະນາແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້;
8. ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ອົງການປົກຄອງເມືອງຊາບຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 34 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ

1. ໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ໃຫ້ປະຊາຊົນເຂົ້າໃຈ ແລະ ເຊື່ອມຊຶມກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍວ່າດ້ວຍສັດນ້ຳ - ສັດປ່າ, ຄຳສັ່ງ ແລະ ຄຳແນະນຳ ກ່ຽວກັບປ່າໄມ້ຢ່າງເລິກເຊິ່ງ;
2. ອອກກົດລະບຽບຂອງບ້ານ ໃນການຄຸ້ມຄອງປ່າໄມ້ ໃຫ້ຖືກຕ້ອງ ແລະ ສອດຄ່ອງກັບ ລະບຽບກົດໝາຍ ໂດຍມີຄວາມເປັນເອກະພາບກັບໜ່ວຍງານປ່າໄມ້ບ້ານ, ປະຊາຊົນ ແລະ ການຈັດຕັ້ງພາຍໃນບ້ານ;
3. ຈັດຕັ້ງ ແລະ ແບ່ງຄວາມຮັບຜິດຊອບໃຫ້ປະຊາຊົນ ແລະ ການຈັດຕັ້ງພາຍໃນບ້ານເພື່ອເຮັດໜ້າທີ່ຄຸ້ມຄອງປ່າໄມ້ໃຫ້ມີປະສິດທິຜົນ;
4. ຮັບການລາຍງານຂອງປະຊາຊົນ ແລະ ການຈັດຕັ້ງພາຍໃນບ້ານກ່ຽວກັບ ການກະທຳຜິດຂອງກຸ່ມຄົນບໍ່ດີ ທີ່ສ້າງຄວາມເສຍຫາຍຕໍ່ຊັບພະຍາກອນປ່າໄມ້ ເພື່ອພ້ອມກັນສະກັດກັ້ນຢ່າງທັນການ;
5. ໃຫ້ການຮ່ວມມືໃນການປ້ອນ ຂໍ້ມູນ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງສະໜອງ ຂໍ້ມູນໃຫ້ຂະແໜງປ່າໄມ້ໃນການວາງແຜນຈັດສັນພື້ນທີ່ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດໃນຂອບ

ເຂດຄວາມຮັບຜິດຊອບຂອງຕົນ ເພື່ອຮັບປະກັນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ແບບຍືນຍົງ;

6. ຮ່ວມກັບໜ່ວຍງານ ປ່າໄມ້ບ້ານ ຄຸ້ມຄອງການນຳໃຊ້ຊັບພະຍາກອນປ່າໄມ້ຕາມປະເພນີ ແລະ ການຊົມໃຊ້ຕ່າງໆຂອງປະຊາຊົນຕາມລະບຽບກົດໝາຍ;

## ໝວດທີ 6

## ອົງການກວດກາ

### ມາດຕາ 35 ອົງການກວດກາປະກອບມີ

1. ອົງການກວດກາພາຍໃນເຊິ່ງແມ່ນ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ປ່າໄມ້ບ້ານ;
2. ອົງການກວດກາພາຍນອກຊຶ່ງແມ່ນ ສະພາປະຊາຊົນແຂວງ, ຄະນະກວດກາລັດ, ອົງການໄອຍະການປະຊາຊົນແຂວງ;

### ມາດຕາ 36 ເນື້ອໃນການກວດກາ

ການກວດກາຄຸ້ມຄອງ, ປົກປັກຮັກສາ ແລະ ຟື້ນຟູປ່າໄມ້ ທີ່ມີເນື້ອໃນດັ່ງນີ້ :

1. ການປະຕິບັດນະໂຍບາຍ, ແຜນຍຸດທະສາດປ່າໄມ້, ແຜນຄຸ້ມຄອງຊັບພະຍາກອນປ່າໄມ້, ກົດໝາຍ ແລະ ລະບຽບການຕ່າງໆທີ່ກ່ຽວພັນກັບວຽກງານປ່າໄມ້;
2. ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງອົງການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ຟື້ນຟູປ່າໄມ້;
3. ການນຳໃຊ້ສິດ, ການປະຕິບັດໜ້າທີ່ ແລະ ການແກ້ໄຂຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້;

### ມາດຕາ 37 ຮູບການກວດກາ

ການກວດກາ ມີດັ່ງນີ້ :

1. ກວດກາ ຕາມລະບົບປົກປະຕິ;
2. ກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ກວດກາ ແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິແມ່ນການກວດກາຕາມແຜນການ ແລະ ການກຳນົດເວລາອັນແນ່ນອນຊຶ່ງຕ້ອງປະຕິບັດຢ່າງໜ້ອຍ ສີ່ຄັ້ງຕໍ່ປີ;

ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າແມ່ນການກວດກາເມື່ອຫາກເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຮັບຮູ້ລ່ວງໜ້າຢ່າງໜ້ອຍ ຊາວສີ່ຊົ່ວໂມງ;

ການກວດກາແບບກະທັນຫັນ ແມ່ນການກວດກາ ເມື່ອຫາກເຫັນວ່າມີຄວາມຈຳເປັນຮີບດ່ວນໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຮັບຮູ້ກ່ອນລ່ວງໜ້າ;

ການກວດກາ ແມ່ນໃຫ້ດຳເນີນທັງການກວດກາດ້ານເອກະສານ, ການກວດກາດ້ານເຕັກນິກ ແລະ ການລົງກວດກາການປະຕິບັດຕົວຈິງຢູ່ພາກສະໜາມ.

# ໝວດທີ 7
# ຂໍ້ຫ້າມ

ມາດຕາ 38 ຂໍ້ຫ້າມ ສຳລັບພະນັກງານ

ຫ້າມ ພະນັກງານ ແລະ ເຈົ້າໜ້າທີ່ ປ່າໄມ້ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່ ຕຳແໜ່ງ ແລະ ຮັບສິນບົນ(ການໃຫ້- ການຮັບ) ເພື່ອຜົນປະໂຫຍດສ່ວນຕົວ;
2. ໃຊ້ສິດໜ້າທີ່ ເກີນຂອບເຂດ ເຊິ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນ;
3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບ ຕໍ່ວຽກງານປ່າໄມ້ ທີ່ການຈັດຕັ້ງມອບໝາຍໃຫ້;
4. ເປີດເຜີຍຄວາມລັບ ຂອງລັດ ແລະ ຂອງລັດຖະການ ກ່ຽວກັບປ່າໄມ້;
5. ປອມແປງເອກະສານ ເຊັ່ນ: ປອມແປງລາຍເຊັນ, ຕາປະທັບ ແລະ ບັນຊີໄມ້, ການວັດແທກໄມ້, ການຈັດຊັ້ນຄຸນນະພາບໄມ້, ຂໍ້ມູນການສຳຫຼວດ, ການກອດກາໄມ້ ແລະ ຕີກາໄມ້;
6. ດຳເນີນ ຫຼື ເຂົ້າຮ່ວມການດຳເນີນທຸລະກິດ ກ່ຽວກັບການຂຸດຄົ້ນ, ຊື້ - ຂາຍໄມ້ ແລະ ຜະລິດຕະພັນໄມ້;
7. ມອບຄ້ອນກາ(ປມ)ໃຫ້ນັກທຸລະກິດ ແລະ ປະຊາຊົນລວມທັງພະນັກງານທີ່ບໍ່ມີໜ້າທີ່ຮັບຜິດຊອບ;
8. ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຄື່ອງໝາຍເຂດແດນ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ;
9. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ແລະ ນຳໃຊ້ມາດຕະການອື່ນ ທີ່ບໍ່ຖືກຕ້ອງຕາມ ກົດໝາຍ;
10. ສ້າງຕັ້ງ ໂຮງຊອຍ, ໂຮງເລື່ອຍ, ໂຮງເຟີນີເຈີ ແລະ ໂຮງງານ ປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ຢູ່ໃນ ຫຼື ຢູ່ໃກ້ກັບປ່າໄມ້ທຸກປະເພດ
11. ມີໄວ້ຄອບຄອງ ເຄື່ອງຈັກຂຸດຄົ້ນໄມ້ , ທຳລາຍປ່າໄມ້ ແລະ ພາຫະນະເປົ້າໝາຍລາກແກ່ໄມ້ສະເພາະ;
12. ພຶດຕິກຳອື່ນໆທີ່ເປັນການລະເມີດກົດໝາຍປ່າໄມ້.

ມາດຕາ 39 ຂໍ້ຫ້າມ ສຳລັບນັກທຸລະກິດ

ຫ້າມນັກທຸລະກິດພາຍໃນ ແລະ ຕ່າງປະເທດທີ່ມີພຶດຕິກຳດັ່ງນີ້:

1. ດຳເນີນການສຳຫຼວດປ່າໄມ້, ຊົມພະຍາກອນປ່າໄມ້, ຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງທີ່ບໍ່ໄດ້ຮັບອະນຸຍາດ;
2. ສ້າງຕັ້ງ ໂຮງຊອຍ, ໂຮງເລື່ອຍ, ໂຮງເຟີນີເຈີ ແລະ ໂຮງງານ ປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ຢູ່ໃນ ຫຼື ຢູ່ໃກ້ກັບປ່າໄມ້ທຸກປະເພດ;
3. ບຸກລຸກທຳລາຍປ່າໄມ້ ແລະ ຊົມພະຍາກອນປ່າໄມ້ ໃນເຂດຫວງຫ້າມເດັດຂາດ ຂອງປ່າປ້ອງກັນ, ປ່າສະຫງວນ, ເຂດເຊື່ອມຕໍ່ລະຫວ່າງປ່າສະຫງວນດ້ວຍກັນ ປ່າສະຫງວນ ກັບ ປ່າປະເພດອື່ນໆ;
4. ຈັບຈອງຕົ້ນໄມ້, ປ່າໄມ້ ຫຼື ເຄື່ອງປ່າຂອງດົງ , ທີ່ດິນປ່າໄມ້ ແລະ ບຸກເບີກເນື້ອທີ່ປ່າໄມ້ນອກເຂດອະນຸຍາດ;
5. ຍ້າຍ, ປ່ຽນແປງປ້າຍໝາຍເຂດແດນປ່າໄມ້ ໃນ 3 ປະເພດປ່າ;

6. ຕັດ, ຊື້-ຂາຍ ແລະ ເຄື່ອນຍ້າຍໄມ້ທຳມະຊາດປະເພດໄມ້ຫວງຫ້າມ, ໄມ້ພິເສດໃກ້ສູນພັນ ໂດຍບໍ່ໄດ້ຮັບອະນຸຍາດ;
7. ມີໄວ້ຄອບຄອງ ເຄື່ອງຈັກຂຸດຄົ້ນໄມ້ ແລະ ພາຫະນະລາກແກ່ໄມ້;
8. ຊື້ຈ້າງໃຫ້ສິນບົນຕໍ່ພະນັກງານ, ເຈົ້າໜ້າທີ່ປ່າໄມ້ແລະ ປະຊາຊົນ.

## ມາດຕາ 40 ຂໍ້ຫ້າມສໍາລັບປະຊາຊົນ

ຫ້າມປະຊາຊົນມີພຶດຕິກຳດັ່ງນີ້:

1. ທຳລາຍປ່າໄມ້ ດ້ວຍການບຸກລຸກ, ບຸກເບີກຖາກຖາງປ່າໄມ້, ຈູດປ່າ, ຕັດໄມ້, ການຕົ້ນໄມ້ ຫຼື ນຳໃຊ້ສານເຄມີໃຫ້ຕົ້ນໄມ້ຕາຍ ຫຼື ດວ້ຍການກະທຳອື່ນໆ ທີ່ບໍ່ຖືກຕອ້ງຕາມລະບຽບ ກົດໝາຍ;
2. ເຂົ້າໄປຕັ້ງຖິ່ນຖານ ຢູ່ເຂດປ່າປອ້ງກັນ, ປ່າສະຫງວນ ແລະ ປ່າຜະລິດ ຫຼື ທຳການຜະລິດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສ້າງຕັ້ງ ໂຮງຊອຍ, ໂຮງເລື່ອຍ, ໂຮງເຟີນີເຈີ ແລະ ໂຮງງານ ປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ຢູ່ໃນ ຫຼື ຢູ່ໃກ້ກັບປ່າໄມ້ທຸກປະເພດ
4. ຕັດ ຊື້-ຂາຍ, ເຄື່ອນຍ້າຍ ຫຼື ເກັບກູ້ໄມ້ທຳມະຊາດ ປະເພດ ຫວງຫ້າມ ແລະ ໄມ້ພິເສດ ທີ່ໃກ້ສູນພັນ ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານ ເຊັ່ນ: ໄມ້ດູ່ລາຍ, ໄມ້ຂະຍູງ, ໄມ້ປະດົງ, ໄມ້ຄຳພີ, ໄມ້ໂລ່ງເລ່ງ ແລະ ໄມ້ຈຳປາປ່າ;
5. ຈັບຈ່ອງຕົ້ນໄມ້, ປ່າໄມ້, ເຄື່ອງປ່າຂອງດົງ, ທີ່ດິນປ່າໄມ້ແລະ ບຸກເບີກເນື້ອທີ່ປ່າໄມ້ນອກເຂດອະນຸຍາດ;
6. ຮ່ວມມື ກັບນັກທຸລະກິດ,ພະນັກງານ ຫຼື ເຈົ້າໜ້າທີ່ໃນການລັກລອບຕັດໄມ້, ບຸກລຸກທຳລາຍປ່າໄມ້ ແລະ ຊັບພະຍາກອນປ່າໄມ້;
7. ປອມແປງເອກະສານ, ຕາປະທັບ ແລະ ຄ້ອນຕີກາປ່າໄມ້;
8. ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ;
9. ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຄື່ອງໝາຍເຂດແດນ ປ່າປອ້ງກັນ, ປ່າສະຫງວນ ແລະ ປ່າຜະລິດ;
10. ຊື້ - ຂາຍໄມ້ ທີ່ບໍ່ຖືກຕອ້ງຕາມກົດໝາຍ;
11. ມີໄວ້ຄອບຄອງ ເຄື່ອງຈັກຂຸດຄົ້ນໄມ້ ແລະ ພາຫະນະລາກແກ່ໄມ້;
12. ພຶດຕິກຳອື່ນ ທີ່ເປັນຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;

## ມາດຕາ 41 ຂໍ້ຫ້າມສໍາລັບການຈັດຕັ້ງ ແລະ ບຸກຄົນອື່ນ

ຫ້າມການຈັດຕັ້ງ ແລະ ບຸກຄົນອື່ນ ມີພຶດຕິກຳດັ່ງນີ້:

1. ໃຊ້ສິດໜ້າທີ່ເກີນຂອບເຂດ, ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນເພື່ອນາບຂູ່ຕໍ່ ພະນັກງານ ເຈົ້າໜ້າທີ່ ຫຼື ຜູ້ອື່ນ;
2. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ເພື່ອຜູ້ອື່ນ;
3. ດຳເນີນທຸລະກິດຂຸດຄົ້ນ, ຊື້ - ຂາຍ ເຄື່ອນຍ້າຍໄມ້ ແລະ ເຄື່ອງປ່າຂອງດົງ ດວ້ຍຕົນເອງ ຫຼື ມີຫຸ້ນສ່ວນໂດຍບໍ່ໄດ້ຮັບອະນຸຍາດ;
4. ອະນຸມັດການຫັນປ່ຽນປະເພດປ່າໄມ້ ແລະ ທີ່ດິນປ່າໄມ້ ໂດຍບໍ່ຖືກຕອ້ງຕາມລະບຽບກົດໝາຍ ລວມທັງການເອົາໄມ້ແລກປ່ຽນ ກັບ ໂຄງການ;

5. ອອກອະນຸຍາດ ຕັດໄມ້ ແລະ ເກັບກູ້ເຄື່ອງປ່າຂອງດົງ;
6. ຂັດຂວາງການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ ປະຕິບັດວຽກງານປ່າໄມ້;
7. ກົດໜ່ວງຖ່ວງດຶງ ການດຳເນີນຄະດີ ກ່ຽວກັບປ່າໄມ້;
8. ພຶດຕິກຳອື່ນທີ່ເປັນຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 42 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ຕ້ອງໄດ້ມີການຍ້ອງຍໍ ໃຫ້ຜູ້ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຕໍ່ວຽກງານ ໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ສ່ວນການຍ້ອງຍໍປະຕິບັດຫຼາຍຮູບແບບ ແຕ່ໃຫ້ມີຄວາມເໝາະສົມຕາມທ່າແຮງ ແລະ ເງື່ອນໄຂຄວາມອາດສາມາດຕົວຈິງ , ຖ້າບຸກຄົນ, ບ້ານທີ່ສາມາດເຮັດໜ້າທີ່ໄດ້ດີ ມີຄວາມສາມາດຖ່າຍທອດ ໃຫ້ບ້ານອື່ນ ໄດ້ກໍ່ສມາດສ້າງເປັນບ້ານຕົວແບບທາງດ້ານຄຸ້ມຄອງ.

### ມາດຕາ 43 ມາດຕະການຕໍ່ຜູ້ລະເມີດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ຈະສຶກສາອົບຮົມ, ກ່າວເຕືອນ, ປະຕິບັດວິໄນ, ປັບໃໝຕາມລະດັບໜັກ ຫຼື ເບົາຕາມລະບຽບກົດໝາຍ ຫຼື ດຳເນີນຄະດີຕາມຂະບວນຍຸຕິທຳ ດັ່ງນີ້:

- **ສຳລັບພະນັກງານ ແລະ ເຈົ້າໜ້າທີ່**

1. ມີສ່ວນຮ່ວມໃນການບຸກລຸກປ່າໄມ້ ແລະ ທີ່ດິນປ່າໄມ້ ຢູ່ໃນປ່າສະຫງວນ, ປ່າປ້ອງກັນ ປ່າຜະລິດ ແລະ ນອກ ສາມ ປະເພດປ່າ , ທີ່ມີເນື້ອທີ່ແຕ່ ໜຶ່ງເຮັກຕາ ຂຶ້ນໄປ.
   - ຄັ້ງທີໜຶ່ງ ຕ້ອງສຶກສາອົບຮົມ, ກ່າວເຕືອນໂດຍບັນທຶກໄວ້ໃນສຳນວນເອກະສານປະຫວັດຂອງຜູ້ກ່ຽວເອງ;
   - ຄັ້ງທີສອງ ຕ້ອງປັບໃໝ ສອງເທົ່າຕົວຂອງມູນຄ່າເສຍຫາຍຂອງໄມ້ ແລະ ທີ່ດິນປ່າໄມ້, ຕ້ອງປູກໄມ້ທົດແທນຄືນ , ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໃຫ້ລັດຄືນ ພ້ອມທັງໂຈະການເລື່ອນຊັ້ນ, ເລື່ອນຂັ້ນ, ບ້ວງບ່ ຕ່າງໆ ແລະ ຍົກຍ້າຍໜ້າທີ່;
   - ຄັ້ງທີສາມ ກໍລະນີບໍ່ເຂັດຫຼາບ ທີ່ໄດ້ກ່າວສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ແຕ່ຍັງສືບຕໍ່ ຕ້ອງປະກອບສຳນວນຄະດີສົ່ງໃຫ້ ອົງການໄອຍະການປະຊາຊົນ ດຳເນີນຄະດີຕາມຂະບວນການຂອງຍຸຕິທຳ;
2. ການທຳລາຍປ່າໄມ້, ລັກລອບຕັດໄມ້ ປະເພດຫວງຫ້າມ, ໄມ້ພິເສດ,ໄມ້ຄຸ້ມຄອງ I, II, III (ປະເພດໄມ້ເນື້ອອ່ອນເຊັ່ນ: ໄມ້ຍາງ, ໄມ້ບາກ, ໄມ້ເປືອຍ, ໄມ້ບົກ, ໄມ້ຕີນເປັດ ແລະ ໄມ້ອື່ນໆ) ໜຶ່ງແມັດກ້ອນຕໍ່ໜຶ່ງຄັ້ງ
   - ຄັ້ງທີໜຶ່ງ ຕ້ອງສຶກສາອົບຮົມ, ກ່າວເຕືອນໂດຍບັນທຶກໄວ້ໃນສຳນວນເອກະສານປະຫວັດຂອງຜູ້ກ່ຽວເອງ;

- ຄັ້ງທີສອງ ຕ້ອງປັບໃໝ ສອງເທົ່າຕົວຂອງມູນຄ່າເສຍຫາຍຂອງໄມ້, ຕ້ອງປູກໄມ້ທົດແທນຄືນ , ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໃຫ້ລັດຄືນ ພ້ອມທັງໂຈະການເລື່ອນຊັ້ນ, ເລື່ອນຂັ້ນ, ຍ້ອງຍໍຕ່າງໆ ແລະ ຍົກຍ້າຍໜ້າທີ່;
- ຄັ້ງທີສາມ ກໍລະນີບໍ່ເຂັດຫຼາບ ທີ່ໄດ້ກ່າວສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ແຕ່ຍັງສືບຕໍ່ ຕ້ອງປະກອບສຳນວນຄະດີສົ່ງໃຫ້ ອົງການໄອຍະການປະຊາຊົນ ດຳເນີນຄະດີຕາມຂະບວນການຂອງຍຸຕິທຳ;

- ສຳລັບນັກທຸລະກິດ

ເຂົ້າບຸກລຸກເນື້ອທີ່ດິນປ່າໄມ້ ຢູ່ໃນປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ ແລະ ນອກ 3 ປະເພດປ່າແຕ່ໜຶ່ງເຮັກຕາຂຶ້ນໄປ ແລະ ການລັກລອບຕັດໄມ້ປະເພດຫວງຫ້າມ, ໄມ້ພິເສດ, ໄມ້ຄຸ້ມຄອງ I,II,III(ປະເພດໄມ້ເນື້ອອ່ອນ ເຊັ່ນ: ໄມ້ຍາງ, ໄມ້ບາກ, ໄມ້ເປືອຍ, ໄມ້ບົກ, ໄມ້ຕີເປັດ ແລະ ໄມ້ອື່ນໆ) ໜຶ່ງແມັດກ້ອນຕໍ່ໜຶ່ງຄັ້ງ;

- ຄັ້ງທີໜຶ່ງ ຈະສຶກສາອົບຮົມ, ສ້າງບົດບັນທຶກກ່າວເຕືອນ ແລະ ສຳເນົາໄວ້;
- ຄັ້ງທີສອງ ຕ້ອງປັບໃໝ ສອງເທົ່າຕົວຂອງມູນຄ່າເສຍຫາຍຂອງໄມ້, ຕ້ອງປູກໄມ້ທົດແທນຄືນ , ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໃຫ້ລັດ;
- ຄັ້ງທີສາມ ກໍລະນີບໍ່ເຂັດຫຼາບ ທີ່ໄດ້ກ່າວສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ແຕ່ຍັງສືບຕໍ່ ຕ້ອງປະກອບສຳນວນຄະດີສົ່ງໃຫ້ ອົງການໄອຍະການປະຊາຊົນ ດຳເນີນຄະດີຕາມຂະບວນການຂອງຍຸຕິທຳ;

- ສຳລັບປະຊາຊົນ

ເຂົ້າບຸກລຸກເນື້ອທີ່ດິນປ່າໄມ້ ຢູ່ໃນປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ ແລະ ນອກ 3 ປະເພດປ່າ ແຕ່ໜຶ່ງເຮັກຕາ ເຮັກຕາຂຶ້ນໄປ ແລະ ການລັກລອບຕັດໄມ້ປະເພດຫວງຫ້າມ, ໄມ້ພິເສດ, ໄມ້ຄຸ້ມຄອງ I,II,III(ປະເພດໄມ້ເນື້ອອ່ອນເຊັ່ນ: ໄມ້ຍາງ, ໄມ້ບາກ, ໄມ້ເປືອຍ, ໄມ້ບົກ, ໄມ້ຕີເປັດ ແລະ ໄມ້ອື່ນໆ) ໜຶ່ງແມັດກ້ອນຕໍ່ໜຶ່ງຄັ້ງ

- ຄັ້ງທີໜຶ່ງ ຈະສຶກສາອົບຮົມ, ສ້າງບົດບັນທຶກໄວ້ຂັ້ນບ້ານ;
- ຄັ້ງທີສອງ ຕ້ອງປັບໃໝ ສອງເທົ່າຕົວຂອງມູນຄ່າເສຍຫາຍຂອງໄມ້, ຕ້ອງປູກໄມ້ທົດແທນຄືນ , ຕ້ອງສົ່ງຊັບສິນທີ່ຕົນໄດ້ມາໃຫ້ລັດຄືນ;
- ຄັ້ງທີສາມ ກໍລະນີບໍ່ເຂັດຫຼາບ ທີ່ໄດ້ກ່າວສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ແຕ່ຍັງສືບຕໍ່ ຕ້ອງປະກອບສຳນວນຄະດີສົ່ງໃຫ້ ອົງການໄອຍະການປະຊາຊົນ ດຳເນີນຄະດີຕາມຂະບວນການຂອງຍຸຕິທຳ;

## ໝວດທີ 9
## ບົດບັນຍັດສຸດທ້າຍ

ມາດຕາ 44  ວັນປູກຕົ້ນໄມ້

ກຳນົດເອົາ ວັນທີ 1 ມິຖຸນາ ຂອງທຸກໆປີ  ແມ່ນເປັນວັນປູກຕົ້ນໄມ້ແຫ່ງຊາດຕິດພັນກັບວັນເດັກນ້ອຍສາກົນ  ເພື່ອລະນຶກເຖິງວັນສຳຄັນດັ່ງກ່າວ ໃນແຕ່ລະປີ ທົ່ວແຂວງຕ້ອງໄດ້ສ້າງຂະບວນການຈັດຕັ້ງປະຕິບັດ ການສຳຫຼວດເນື້ອທີ່ໃນການປູກໄມ້, ປູກໄມ້ຕາມສະຖານທີ່ຕ່າງໆທີ່ເໝາະສົມ, ຟື້ນຟູປ່າໃນເຂດປອກໂຫຼ້ນ ແລະ ເຂດປ່າຊຸດໂຊມ  ເພື່ອເປັນການກະກຽມການສະໜອງເບ້ຍໄມ້ໃຫ້ພຽງພໍກັບຄວາມຕ້ອງການ.

ມາດຕາ 45   ການຈັດຕັ້ງປະຕິບັດ.

ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງປະສານສົມທົບກັບພາກສ່ວນກ່ຽວຂ້ອງເປັນຜູ້ຜັນຂະຫຍາຍ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 46  ຜົນສັກສິດ.

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງ ສາລະວັນ

ບ່ອນສົ່ງ:

1. ສະພາປະຊາຊົນແຂວງ 01 ສະບັບ.
2. ຄະນະຮັບຜິດຊອບສ້າງຮ່າງນິຕິກຳ 01 ສະບັບ.
3. ພະແນກກະສິກຳ ແລະ ປ່າໄມ້ແຂວງ 01 ສະບັບ.
4. ເກັບຮັກສາໄວ້ 02 ສະບັບ.

ໂພໄຊ ໄຊຍະສອນ